ທຄຕລ BCEL ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ຮັບສະໝັກເພື່ອນຮ່ວມງານ

ຮ່ວມເປັນສ່ວນໜຶ່ງ...
ກ້າວໄປຂ້າງໜ້າສູ່ຄວາມສຳເລັດກັບພວກເຮົາ



**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ເປັນທະນາຄານທີ່ດຳເນີນການເຄື່ອນໄຫວວຽກງານພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ. ທຄຕລ ມີຄວາມມຸ່ງໝັ້ນໃນການສ້າງປະໂຫຍດ ແລະ ອຳນວຍຄວາມສະດວກໃນການເຮັດທຸລະກຳທາງດ້ານການເງິນ ໃຫ້ແກ່ລູກຄ້າ. ປະຈຸບັນ ທຄຕລ ມີ 19 ສາຂາ ແລະ ຫຼາຍກວ່າ **70** ໜ່ວຍບໍລິການທົ່ວປະເທດ. ພວກເຮົາມີຄວາມຍິນດີ ແລະ ຕ້ອງການເພື່ອນຮ່ວມງານຈຳນວນຫຼາຍຕຳແໜ່ງປະກອບໃຫ້ບັນດາພະແນກການ ແລະ ສາຂາທົ່ວປະເທດ ເພື່ອເຂົ້າມາຮ່ວມສ້າງສາ ແລະ ພັດທະນາ ທຄຕລ ໃຫ້ມີຄວາມກ້າວໜ້າ ແລະ ເຕີບໃຫຍ່ໄປພ້ອມໆກັນ.

**ທຄຕລ ສາຂາຫຼວງພະບາງ** ຕ້ອງການຮັບພະນັກງານໃໝ່ ເພື່ອປະກອບໃຫ້ບັນດາຂະແໜງພາຍໃນທີ່ຈຳເປັນ ດັ່ງນີ້:

- ວິຊາການ Teller ຂະແໜງບໍລິການ, ຂະແໜງຄັງສາງ ແລະ ບັນດາໜ່ວຍບໍລິການຕ່າງໆ 10 ຕຳແໜ່ງ:

**ເງື່ອນໄຂຜູ້ສະໝັກ:** ເພດ: **ຍິງ ຫຼື ຊາຍ** ອາຍຸບໍ່ເກີນ **30** ປີ.

- ✔ ມີໃບປະກາດຈົບຊັ້ນສູງຂຶ້ນໄປ ດ້ານການເງິນ, ການທະນາຄານ, ບັນຊີ, ເສດຖະສາດ, ບໍລິຫານທຸລະກິດ ຈາກພາຍໃນ ຫຼື ຕ່າງປະເທດ ທີ່ມີຄະແນນ **CGPA** ໂດຍສະເລ່ຍ **2.70** ຫຼື **6.75/10** ຂຶ້ນໄປ
- ✔ ສາມາດສື່ສານພາສາອັງກິດ (ເວົ້າ, ຂຽນ, ອ່ານ) ລະດັບດີ ຫຼື ຖ້າຫາກສາມາດເວົ້າພາສາຕ່າງປະເທດອື່ນໆໄດ້ກໍຍິ່ງເປັນການດີ.
- ✔ **ຕ້ອງເປັນຄົນທ້ອງຖິ່ນແຂວງຫຼວງພະບາງ, ໄຊຍະບູລີ, ອຸດົມໄຊ, ຊຽງຂວາງ ຫຼື ອາໄສຢູ່ແຂວງຫຼວງພະບາງເປັນການຖາວອນ.**
- ✔ ມີຄວາມຮູ້ພື້ນຖານການນຳໃຊ້ຄອມພິວເຕີ (ຖ້າມີໃບຢັ້ງຢືນຍິ່ງເປັນການດີ)

**ຄຸນລັກສະນະຜູ້ສະໝັກ:**

- ✔ ຊື່ສັດບໍລິສຸດ, ມະນຸດສຳພັນດີ
- ✔ ບຸກຄະລິກວ່ອງໄວຫ້າວຫັນ ແລະ ອົດທົນ .
- ✔ ລະອຽດຮອບຄອບ, ມີລະບຽບວິໄນ ແລະ ຮັບຜິດຊອບສູງ.
- ✔ ມີຄວາມສາມັກຄີ, ສາມາດເຮັດວຽກເປັນທີມໄດ້.
- ✔ ສາມາດເຮັດວຽກພາຍໃຕ້ຄວາມກົດດັນ.
- ✔ ມີໃຈຮັກໃນວຽກງານບໍລິການ.
- ✔ ກົງຕໍ່ເວລາ ແລະ ມີຄວາມເສຍສະຫຼະ.

**ວິທີສະໝັກວຽກ:**

1) ຜູ້ທີ່ສົນໃຈສາມາດພົວພັນເຂົ້າຮັບເອກະສານດ້ວຍຕົນເອງໄດ້ທີ່ **ຂະແໜງຫ້ອງການ-ບັນຊີ-ໄອທີ ຂອງ ທຄຕລ ສາຂາຫຼວງພະບາງ.** ໂດຍໃຫ້ຖືໃບປະກາດວິຊາສະເພາະ ແລະ ໃບຄະແນນ ສະບັບຂອງແທ້ ມາຢັ້ງຢືນໃນການຂໍຮັບແບບຟອມສະໝັກງານ, ສອບຖາມຂໍ້ມູນໂທ: **071 252814.**
2) ບໍ່ອະນຸຍາດໃຫ້ພໍ່ແມ່, ອ້າຍ-ເອື້ອຍ ແລະ ພີ່ນ້ອງຂອງຜູ້ສະໝັກງານມາພົວພັນຮັບ-ສົ່ງເອກະສານແທນ.
3) ***ກຳນົດເລີ່ມແຈກ-ຮັບ ເອກະສານສະໝັກຕັ້ງແຕ່ ວັນທີ 06-20/09/2017.***

ທີ່ຫຼວງພະບາງ, ວັນທີ 15/09/2017

ເຊັນແທນ ຫົວໜ້າສາຂາຫຼວງພະບາງ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ບ. ເພັດສະໝອນ ຈັນທະມາດ